# ບົດສັງລວມ

ໜຶ່ງປີຜ່ານມາ ພາຍຫລັງຜະເຊີນໜ້າກັບເສດຖະກິດຕົກຕໍ່າຢ່າງເປັນປະຫວັດການ, ທະວີບເອເຊຍກໍ່ກໍາລັງນໍາໜ້າການຟື້ນຕົວໃນຂອບເຂດທົ່ວໂລກ. ອັດຕາຄົນຫວ່າງງານທີ່ສູງ, ສະພາບການເງິນໃນຄົວເຮືອນທີ່ອ່ອນແອ, ສິນເຊື່ອທະນາຄານທີ່ຈາງຫາຍ ໄດ້ຢັບຢັ້ງບາດກ້າວຂອງການຟື້ນຕົວຂອງເສດຖະກິດທີ່ກ້າວໜ້ານີ້ ແລະ ກໍຍັງຂຶ້ນກັບການສະໜັບສະໜູນຢ່າງໜັກໜ່ວງຈາກນະໂຍບາຍເສດຖະກິດມະຫາພາກ. ໃນທາງກັບກັນ, ກິດຈະກໍາຢູ່ໃນຕະຫລາດທີ່ກໍາລັງພົ້ນເດັ່ນ ແລະ ກໍາລັງພັດທະນາຢູ່ຫລາຍບ່ອນ ຍັງສືບຕໍ່ດີດຕົວຢ່າງໄວຕະຫລອດປີ 2009 ແລະ ໄຕມາດທໍາອິດຂອງປີ 2010 ໂດຍສະເພາະແລ້ວຢູ່ເອເຊຍ. ຮູບແບບຂອງການຟື້ນຕົວທາງດ້ານເສດຖະກິດຢູ່ເອເຊຍແມ່ນແຕກຕ່າງກັນອອກໄປ, ໂດຍຈະອຽງໄປທາງດ້ານເສດຖະກິດຫັນສູ່ພາຍໃນ (ຈີນ, ອິນເດຍ, ອິນໂດເນເຊຍ) ແລະ ປະເທດອອສເຕຣເລຍ ກໍາລັງຫຼຸດພົ້ນຈາກເສດຖະກິດຕົກຕໍ່ານີ້ ແລະ ເສດຖະກິດສໍາລັບການສົ່ງອອກກໍ່ປະສົບກັບວົງວຽນທຸລະກິດແບບຮູບຕົວ ວີ (V). ໃນທ້າຍປີ 2009 ຜົນຮັບຂອງບັນດາປະເທດເອເຊຍເກືອບທັງໝົດ ໄດ້ກັບຄືນສູ່ລະດັບກ່ອນວິກິດເສດຖະກິດ ແມ້ກະທັ້ງຢູ່ໃນບັນດາເສດຖະກິດທີ່ຖືກວິກິດຢ່າງຮ້າຍແຮງ.

ການຟື້ນຕົວທີ່ໄວກວ່າຂອງທະວີບເອເຊຍ ໂດຍທຽບໃສ່ສ່ວນອື່ນໆຂອງໂລກເບິ່ງຄືວ່າເປັນຂີດໝາຍຂອງການຫັບມ້າງສິ່ງທີ່ຜ່ານມາ. ເຖິງວ່າທ່າອ່ຽງຂະຫຍາຍຕົວຂອງລາຍໄດ້ສະເລ່ຍຫົວຄົນຂອງເອເຊຍໄດ້ລື່ນເກີນບັນດາປະເທດທີ່ກ້າວໜ້າໃນຊຸມ 3 ທົດສະວັດຜ່ານມາ, ເທື່ອນີ້ແມ່ນເທື່ອທໍາອິດທີ່ທະວີບເອເຊຍໄດ້ປະກອບສ່ວນເຂົ້າໃນການຟື້ນຟູເສດຖະກິດຂອງໂລກ ແລະ ໄປໄດ້ໄວກວ່າພາກພື້ນອື່ນໆ. ນອກຈາກນັ້ນ, ເຖິງວ່າສະພາບເສດຖະກິດຕົກຕໍ່າໃນຜ່ານມາ, ການຟື້ນຕົວຂອງທະວີບເອເຊຍ ແມ່ນຊຸກດັນດ້ວຍການສົ່ງອອກໂດຍລວມ, ແຕ່ວ່າເທື່ອນີ້ມັນໄດ້ຮັບການເສີມກໍາລັງຈາກຄວາມຕ້ອງການທີ່ບໍ່ຕາຍຕົວ ໂດຍສະເພາະການບໍລິໂພກຢູ່ໃນຄົວເຮືອນ. ໃນທີ່ສຸດ, ໃນຂະນະທີ່ການຟື້ນຕົວຫລາຍຄັ້ງຜ່ານມາ ເງິນທຶນແມ່ນກັບຄືນມາສູ່ທະວີບເອເຊຍຊັກຊ້າ, ແຕ່ໃນເທື່ອນີ້ເງິນທຶນສຸດທິໄຫລເຂົ້າສູ່ພູມີພາກຂຶ້ນແຮງ, ມັນແມ່ນການສະທ້ອນອັນນຶ່ງຂອງຫັລກຊັບໃຊ້ສອຍໃນໂລກທີ່ມີລະດັບສູງທີ່ສຸດ ແຕ່ກໍຍັງແມ່ນພີໄນກໍາອັນນຶ່ງຂອງທະວີບເອເຊຍທີ່ມີຄວາມຍືດຫົດ ແລະ ຂອບເສດຖະກິດ ທີ່ໄດ້ຮັບການປັບປຸງ.

ຄືດັ່ງໄດ້ອະທິບາຍໄວ້ໃນບົດ ທີ I ແລະ II, ໃນໄລຍະອັນໄກ້ນີ້, ທະວີບເອເຊຍຄາດວ່າຈະສືບຕໍ່ນໍາໜ້າການຟື້ນຕົວຢູ່ໃນໂລກ ດ້ວຍເຫດຜົນສອງປະການ. ອັນທີ 1, ວົງຈອນຂອງສິນຄ້າພາຍໃນ ແລະ ທົ່ວໂລກ ໜ້າຈະຊຸກຍູ້ການຜະລິດ ແລະ ການສົ່ງອອກອຸດສາຫະກໍາຂອງທະວີບເອເຊຍ ຂຶ້ນຕື່ມ ໃນປີ 2010 ເປັນສ່ວນໃຫ່ຍ ຍ້ອນຄວາມຕ້ອງການໄດ້ຟື້ນຕົວເຂົ້າສູ່ເສດຖະກິດທີ່ຂະຫຍາຍຕົວ. ອັນທີ 2, ເຖິງວ່ານະໂຍບາຍເສດຖະກິດມະຫາພາກ ອາດບໍ່ເປັນທີ່ຮອງຮັບໄດ້ດີ, ຄວາມຕ້ອງການຂອງເອກະຊົນພາຍໃນຄາດວ່າຈະຍັງເຂັ້ມແຂງຢູ່. ໃນເມື່ອກິດຈະກໍາກ່ຽວກັບການຟື້ນຕົວຂອງເສດຖະກິດຍັງບໍ່ເໜັງຕີງ, ລັດຖະ

ບານຫຼາຍປະເທດກຳລັງວາງແຜນຖອນນະໂຍບາຍກະຕຸ້ນດ້ານເນັດເງິນ ແລະ ລາຍຮັບການເງິນ. ເສດຖະກິດຢູ່ໃນຫຼາຍພູມິພາກ, ເຖິງຢ່າງໃດກໍ່ຕາມ, ຄວາມຕ້ອງການຂອງພາກເອກະຊົນພາຍໃນເໝືອນຈະເປັນແຮງຊຸກດັນພຽງພໍເພື່ອການເຕີບໃຫຍ່ຂະຫຍາຍຕົວໄລຍະໃກ້ແບບຍືນຍົງ, ຍ້ອນວ່າມູນຄ່າສູງຂອງຊັບສົມບັດ, ຜູ້ບໍລິໂພກມີຄວາມເຊື່ອໝັ້ນສູງ, ແລະ ການປັບປຸງເງື່ອນໄຂຂອງການຈ້າງງານເປັນກ້າວໆ ກໍ່ໄດ້ຄາດກັນວ່າຈະສາມາດຄ້ຳຈຸນການບໍລິໂພກໄດ້, ໃນຂະນະທີ່ການນຳໃຊ້ຄວາມສາມາດໄດ້ກັບຄືນມາສູ່ລະດັບປົກກະຕິ ກໍຄາດກັນວ່າຈະເພີ້ມພະລັງໃຫ້ແກ່ການລົງທຶນ.

ເຖິງຢ່າງໃດກໍ່ຕາມ, ບາດກ້າວຂອງການຟື້ນຕົວກໍ່ຍັງບໍ່ທັນສະໝ່ຳສະເໝີຕະຫຼອດທົ່ວທະວີບເອເຊຍ. ຢູ່ປະເທດຈີນ, ການເຕີບໃຫຍ່ຂະຫຍາຍຕົວແມ່ນຄາດວ່າຈະສູງຂຶ້ນເຖິງ 2 ຕົວເລກໃນປີ 2010 ພ້ອມກັບການເພີ້ມຄວາມຕ້ອງການຂອງພາກເອກະຊົນພາຍໃນດ້ວຍມາດຕະການເພີ້ມທະວີການບໍລິໂພກ ແລະ ການລົງທຶນພາຍໃນ. ຍ້ອນວ່າການນຳເຂົ້າຂອງປະເທດຈີນຮຽກຮ້ອງໃຫ້ມີການສົ່ງເສີມ, ວິທີນີ້ເຮັດໃຫ້ເກີດການກະຈາຍເງິນສູ່ພູມີພາກທີ່ຍັງເຫລືອ ໂດຍສະເພາະເຄື່ອງຂອງ ແລະ ອຸບປະກອນໃຫ່ຍໆ. ຍ້ອນຫລິງເຫັນຈຸດແຂງຂອງຄວາມຕ້ອງການ, ອຳນາດການປົກຄອງຈີນ ຈຶ່ງໄດ້ເລີ້ມຕົ້ນຍົກສູງການເຕີບໃຫຍ່ຂະຫາຍຕົວດ້ານສິນເຊື່ອໃຫ້ໄວ ເພື່ອປົກປັກຮັກສາຄວາມດຸນດ່ຽງຂອງທະນາຄານໃວ້. ຢູ່ປະເທດຍີ່ປຸ່ນ, ຄວາມຕ້ອງການຂອງພາກເອກະຊົນ ຍັງສືບຕໍ່ຜະເຊີນໜ້າກັບກະແສລົມ ເຖິງແມ່ນວ່າການຟື້ນຕົວຂອງພາກສົ່ງອອກ ແລະ ເງິນເຟີ້ໄດ້ລຸດລົງຢູ່ຂົ້ວລົບກໍຕາມ, ແຕ່ກໍ່ຍັງຮຽກຮ້ອງໃຫ້ອຳນາດປົກຄອງຢືນຢັນພັນທະຂອງຕົນເພື່ອຍຶດນະໂຍບາຍເພື່ອຮອງຮັບອອກໄປຕື່ມອີກ.

ຖານະແຂງແກ່ນຂອງທະວີບເອເຊຽທຽບໃສ່ບ່ອນອື່ນອາດກໍ່ໃຫ້ເກີດຄວາມສ່ຽງໃນໄລຍະໃກ້, ໂດຍສະເພາະແລ້ວ ຖ້າການຄາດຄະເນການເຕີບໃຫ່ຍຂະຫຍາຍຕົວຫາກສົດໃສ ແລະ ການດັດສົມຄວາມແຕກຕ່າງລະຫວ່າງດອກເບັ້ຽກັບເສດຖະກິດທີ່ກ້າວໜ້າໃຫ້ກວ້າງອອກ ກໍ່ຈະນຳໄປສູ່ເງິນລົງທຶນໄຫລເຂົ້າມາສູ່ພູມີພາກເພີ້ມຂຶ້ນ. ການໄຫລເຂົ້າມານີ້ອາດເຮັດໃຫ້ເສດຖະກິດບາງຢ່າງຮ້ອນສູງຂຶ້ນ ແລະ ເພີ້ມຄວາມອ່ອນແອເພື່ອຕ້ານທານກັບຄວາມບໍ່ໝັ້ນຄົງດ້ານສິນເຊື່ອ ແລະ ຮອບໝຸນຂອງລາຄາ-ຊັບສິນ ຢ່າງຮຸນແຮງ, ພ້ອມກັບທ່າອ່ຽງຂອງການປີ້ນກັບຢ່າງກະທັນຫັນໃນພາຍໜ້າ. ເຖິງແມ່ນວ່າໄພເງິນເຟີ້ຂອງຊັບສິນ-ລາຄາ ຢູ່ທະວີບເອເຊຍໄດ້ຖືກຈຳກັດຂອບເຂດແລ້ວໂດຍລວມ, ແຕ່ການເພີ້ມຂຶ້ນຂອງເງິນຫລັກຊັບໃຊ້ສອຍເກີນຂະໜາດເສດຖະກິດຢູ່ໃນຫລາຍພູມີພາກ ໃນໄລຍະປີ 2009 ກໍ່ເປັນເລື່ອງທີ່ໜ້າເປັນຫ່ວງ. ນັກການເມືອງທັງຫລາຍຈຳເປັນຈະຕ້ອງເອົາໃຈໃສ່ເພື່ອປົກປັກຮັກສາລະບົບເສດຖະກິດມະຫາພາກ ແລະ ການເງິນເພື່ອຕ້ານກັບການສະສົມຂອງຄວາມບໍ່ດຸນດ່ຽງລະຫ່ວາງ ຊັບສິນພາຍໃນ ກັບຕະຫລາດທີ່ຢູ່ອາໃສ.

ຕະຫລອດໄລຍະກາງ, ສິ່ງທ້າທາຍດ້ານນະໂຍບາຍການເມືອງທີ່ສຳຄັນຂອງທະວີບເອເຊຽ ກໍ່ຈະແມ່ນເພື່ອຮັບປະກັນໃຫ້ຄວາມຕ້ອງການຂອງພາກເອກະຊົນພາຍໃນ ກາຍເປັນກົນຈັກທີ່ສຳຄັນສຳລັບການເຕີບໃຫຍ່ຂະຫຍາຍຕົວ. ເມື່ອໃດການດັດສົມສິນຄ້າທີ່ເກັບໃວ້ ໄດ້ດຳເນີນການຕາມເສັ້ນທາງຂອງມັນ, ເວລານັ້ນ

ການສົ່ງອອກຂອງທະວີບເອເຊຍເພື່ອຊຸກດັນການຂະຫຍາຍຕົວທາງເສດຖະກິດ ກໍ່ໜ້າຈະບັນເທົາລົງ ດ້ວຍວ່າຄວາມຕ້ອງການ ຄາດວ່າຈະຍັງເຫລືອຕໍ່າກວ່າລະດັບກ່ອນວິກິດ, ຊຶ່ງທໍາລາຍຄວາມຕ້ອງການໃນໂລກ. ເຖິງແມ່ນກໍລະນີທີ່ເດັ່ນທີ່ສຸດ, ປະເທດຈີນກໍ່ຈະສະໜອງໄດ້ຄວາມສົມດູນພຽງແຕ່ສ່ວນນຶ່ງ ໃຫ້ແກ່ຄວາມຕ້ອງການທີ່ອ່ອນລົງເລື້ອຍໆຈາກສະພາບເສດຖະກິດທີ່ກ້າວໜ້າ ໂດຍເຫັນໄດ້ຈາກການບໍລິໂພກ ແລະການນໍາເຂົ້າສິນຄ້າບໍລິໂພກ ເປັນຂະໜານນ້ອຍ. ວິກິດການໂລກໄດ້ເນັ້ນໃຫ້ເຫັນຄວາມສໍາຄັນສໍາລັບທະວີບເອເຊຍ ໃນຖານະກົນຈັກແຫ່ງການເຕີບໃຫຍ່ຂະຫຍາຍຕົວພາຍໃນ ຊຶ່ງສາມາດທົດແທນຄວາມຕ້ອງການທີ່ສູນເສຍໄປຈາກໂລກອຸດສາຫະກໍາ ແລະ ບັນເທົາຜົນກະທົບພາຍນອກຕໍ່ເສດຖະກິດຂອງທະວີບເອເຊຍ. ຄວາມຕ້ອງການຂອງພາກເອກະຊົນພາຍໃນນີ້ ຈໍາເປັນຈະຕ້ອງຫຼໍ່ລ້ຽງໂດຍການປະຕິຮູບດ້ານໂຄງສ້າງຈໍານວນນຶ່ງໃນພູມີພາກ.

ຕົວຈິງແລ້ວ, ບົດທີ III ແນະນໍາວ່າ ທະວີບເອເຊຍຍັງຂຶ້ນກັບຄວາມຕ້ອງການພາຍນອກຢ່າງໜັກໜ່ວງ - ຫຼາຍກວ່າພູມີພາກອື່ນ. ການເຮັດໃຫ້ການດຸ່ນດ່ຽງຄືນສູ່ຄວາມຕ້ອງການພາຍໃນ ມັນຮຽກຮ້ອງໃຫ້ເສດຖະກິດຢູ່ໃນພູມີພາກສ່ວນຫຼາຍ ຕ້ອງກະທໍາແບບຂ້າມເຂດ. ບາງເສດຖະກິດອາດຈໍາເປັນຕ້ອງເພີ້ມທະວີການບໍລິໂພກ, ສ່ວນອື່ນຈໍາເປັນຈະຕ້ອງເພີ້ມທະວີການລົງທຶນ ແລະ ສ່ວນຫຼາຍຍັງຈໍາເປັນຈະຕ້ອງເພີ້ມປະສິດທິພາບໃນຂົງເຂດການບໍລິການ. ມາດຕະການຄົບຊຸດທີ່ຮອງຮັບຢູ່ໃນພູມີພາກ - ລວມທັງມາດຕະການທາງການເງິນ, ການປະຕິຮູບຜະລິດຕະພັນ, ແຮງງານ ແລະ ຕະຫຼາດການເງິນອື່ນໆ ແລະອັດຕາແລກປ່ຽນທີ່ອ່ອນໂຍນ - ຈະປະກອບສ່ວນຢ່າງສໍາຄັນທີ່ສຸດຕໍ່ການດຸ່ນດ່ຽງຄືນຄວາມຕ້ອງການຢູ່ໃນໂລກ.